# ບົດຄວາມ

# ການປັບຂຶ້ນລາຄາຂາຍຍົກ-ຂາຍຍ່ອຍນໍ້າມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ

# ຄັ້ງວັນທີ 3 ພຶດສະພາ 2019.

ມາຮອດປະຈຸບັນ, ລາຄານໍ້າມັນເຊື້ອໄຟໃນຕະຫຼາດໂລກເວົ້າລວມ, ເວົ້າສະເພາະນໍ້າມັນສໍາເລັດຮູບຕະຫຼາດສິງກະໂປ ໂດຍສະເລ່ຍຕະຫຼາດສິງກະໂປ ແຕ່ວັນທີ 4 – 18 ເມສາ 2019 (15 ວັນ) ບວກຄ່າຂົນສົ່ງ, ຄ່າປະກັນໄພ ແລະ ອື່ນໆ ຮອດລາວ ສົມທຽບກັບລາຄານໍາເຂົ້າປະຕິບັດຄັ້ງວັນທີ 10 ເມສາ 2019 ຜ່ານມາ ເຫັນວ່າ: ລາຄານໍ້າມັນແອັດຊັງພິເສດ ສໍາເລັດຮູບຕະຫຼາດສິງກະໂປ ເພີ່ມຂຶ້ນຄິດເປັນ 6,32 %, ນໍ້າມັນແອັດຊັງທໍາມະດາ ເພີ່ມຂຶ້ນຄິດເປັນ 6,06 % ແລະ ນໍ້າມັນກາຊວນ ເພີ່ມຂຶ້ນຄິດເປັນ 2,05 %.

ດັ່ງທີ່ກ່າວມາຂ້າງເທິງ, ເຫັນວ່າ: ຖ້າລາຄານໍ້າມັນເຊື້ອໄຟ ໃນຕະຫຼາດໂລກ ກໍຄືລາຄານໍ້າມັນສໍາເລັດຮູບຕະຫຼາດສິງກະໂປ ຍັງສືບຕໍ່ເໜັງຕີງ ແຕ່ 4.862 – 5.026 ກີບ/ລິດ ຈະເຮັດໃຫ້ລາຄານໍ້າມັນເຊື້ອໄຟ ພາຍໃນປະເທດປະຕິບັດຄັ້ງວັນທີ 3 ພຶດສະພາ 2019 ຕ້ອງປັບນໍ້າມັນແອັດຊັງພິເສດ ຂຶ້ນ 580 ກີບ/ລິດ ຫຼື ຄິດເປັນ 5,5 %, ແອັດຊັງທໍາມະດາ ຂຶ້ນ 500 ກີບ/ລິດ ຫຼື ຄິດເປັນ 5,4 % ແລະ ກາຊວນ ຂຶ້ນ 170 ກີບ/ລິດ ຫຼື ຄິດເປັນ 2,0 %. ສະນັ້ນ, ກົມການຄ້າພາຍໃນ ໄດ້ປະສານສົມທົບກັບ ກົມພາສີ, ກົມສ່ວຍສາອາກອນ ກະຊວງການເງິນ ແລະ ສະມາຄົມນໍ້າມັນເຊື້ອໄຟ ແລະ ອາຍແກັສ ຄົ້ນຄວ້າ ແລະ ລາຍງານຂໍທິດຊີ້ນໍາຈາກຂັ້ນເທິງ. ໃນຄັ້ງວັນທີ 30 ເມສາ 2019 ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ໄດ້ມີທິດຊີ້ນໍາເຫັນດີໃຫ້ຫຼຸດການເກັບຄັງແຮນໍ້າມັນແອັດຊັງພິເສດ ແລະ ແອັດຊັງທໍາມະດາ ລົງ 250 ກີບ/ລິດ, ສ່ວນຄັງແຮກາຊວນ ໃຫ້ຫຼຸດລົງ 50 ກີບ/ລິດ ເພື່ອບໍ່ໃຫ້ສົ່ງຜົນກະທົບຕໍ່ພື້ນຖານເສດຖະກິດ ກໍຄືຜູ້ຊົມໃຊ້ຫຼາຍເກີນໄປ, ເຮັດໃຫ້ລາຄາຂາຍຍ່ອຍນໍ້າມັນເຊື້ອໄຟ ເວົ້າສະເພາະຈຸດນະຄອນຫຼວງວຽງຈັນ ທີ່ຈະປະຕິບັດໃໝ່ ຄັ້ງວັນທີ 3 ພຶດສະພາ 2019 ນີ້ ແມ່ນ:

- ລາຄາຂາຍຍ່ອຍນໍ້າມັນແອັດຊັງພິເສດ ຈາກ 10.520 ເພີ່ມຂຶ້ນເປັນ 10.820 ກີບ/ລິດ (ເພີ່ມຂຶ້ນ 300 ກີບ/ລິດ ຫຼື ຄິດເປັນ 2,85 %).
- ລາຄານໍ້າມັນແອັດຊັງທໍາມະດາ ຈາກ 9.310 ເພີ່ມຂຶ້ນເປັນ 9.540 ກີບ/ລິດ (ເພີ່ມຂຶ້ນ 230 ກີບ/ລິດ ຫຼື ຄິດເປັນ 2,47 %).
- ລາຄານໍ້າມັນກາຊວນ ຈາກ 8.600 ເພີ່ມຂຶ້ນເປັນ 8.710 ກີບ/ລິດ (ເພີ່ມຂຶ້ນ 110 ກີບ/ລິດ ຫຼື ຄິດເປັນ 1,27 %).

ຕໍ່ສະພາບການເໜັງຕີງລາຄານໍ້າມັນເຊື້ອໄຟໃນຕະຫຼາດໂລກ ກໍຄືການເໜັງຕີງເພີ່ມຂຶ້ນຂອງລາຄານໍ້າມັນເຊື້ອໄຟພາຍໃນປະເທດດັ່ງທີ່ກ່າວຂ້າງເທິງ ເປັນຊ່ວງໄລຍະທີ່ປວງຊົນລາວບັນດາເຜົ່າ ກໍາລັງສະເຫຼີມສະຫຼອງວັນກໍາມະກອນດ້ວຍຄວາມຟົດຟື້ນ, ເບີກບານມ່ວນຊື່ນ, ຈຶ່ງຮຽກຮ້ອງມາຍັງທະຫານ, ຕໍາຫຼວດ, ພະນັກງານ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ຈົ່ງມີສະຕິລະວັງຕົວ, ປະຢັດມັດທະຍັດໃຊ້ຈ່າຍໃນສິ່ງທີ່ຈໍາເປັນ ໂດຍສະເພາະ ແມ່ນການຊົມໃຊ້ຍານພາຫະນະ; ໃນຂະນະດຽວກັນ ກໍຮຽກ ຮ້ອງມາຍັງບັນດາຜູ້ປະກອບການທຸລະກິດຕ່າງໆ ຈົ່ງຢ່າໄດ້ສວຍ ໂອກາດຂຶ້ນລາຄາສິນຄ້າຕາມລໍາພັງໃຈ ແລະ ກັກຕຸນສິນຄ້າ ກໍຄືນໍ້າມັນເຊື້ອໄຟ ໃນໄລຍະລາຄານໍ້າມັນເຊື້ອໄຟເໜັງຕີງຂຶ້ນ, ຫາກພົບເຫັນການສວຍໂອກາດຂຶ້ນລາຄາສິນຄ້າ ແມ່ນຈະໄດ້ໃຊ້ມາດຕະການຕາມກົດໝາຍ ແລະ ລະບຽບການ.

ຫາກພົບເຫັນ ການສວຍໂອກາດຂຶ້ນລາຄາສິນຄ້າ ທ່ານສາມາດ ໂທແຈ້ງສາຍດ່ວນ 1510 ແລະ ເວັບໄຊປົກປ້ອງຜູ້ຊົມໃຊ້ WWW.lcp.gov.la ໄດ້.

ໝາຍເຫດ: ຕົ້ນປີ 2019 ຮອດປະຈຸບັນ ໄດ້ປັບລາຄານໍ້າມັນເຊື້ອໄຟ ທັງໝົດແລ້ວ 6 ຄັ້ງ (ລວມການປັບຄັ້ງນີ້), ໃນນັ້ນ ປັບຂຶ້ນ 4 ຄັ້ງ, ປັບລົງ 2 ຄັ້ງ.

ຂໍຂອບໃຈ